# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 6 ພຶສພາ 2007 (5-6-2007)

## ຖວາຍກຽດແດ່ພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ຟີລິບປອຍ 2:1-8; 4:2-9

**ພຣະຄັມພີແຫ່ງຄວາມຈິງ:** ກໍຣະນີທີ່ບໍ່ຖືກຕ້ອງປອງດອງກັນກໍນຳໂອກາດໃນການທີ່ຈະເຮັດໃຫ້ພໍພຣະທັຍ ແລະ ຖວາຍກຽດຕໍ່ພຣະເຈົ້າໄດ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ເປັນຜູ້ສ້າງຄວາມສງົບສຸກທີ່ແທ້ຈິງແລະແກ້ໄຂບັນຫາຂໍ້ຂັດແຍ່ງສ່ວນຕົວຂອງແຕ່ລະຄົນໂດຍ:

- ການຕັດສິນໃຈໃນການທີ່ຈະໃຫ້ພໍພຣະທັຍແລະຖວາຍກຽດຕໍ່ພຣະເຈົ້າໃນກໍຣະນີທີ່ຂັດແຍ່ງກັນ; ແລະ
- ການສັງເກດຮູ້ເຖິງທາງທີ່ທ່ານຈະເຮັດໃຫ້ພໍພຣະທັຍແລະຖວາຍກຽດຕໍ່ພຣະເຈົ້າໃນກໍຣະນີທີ່ຂັດແຍ່ງກັນ.

## ຂ້າພະເຈົ້າຈະເຮັດໃຫ້ພໍພຣະທັຍແລະຖວາຍກຽດຕໍ່ພຣະເຈົ້າໃນເມື່ອມີເຫດການຂັດແຍ້ງກັນໄດ້ຢ່າງໃດ?

ຂ້າພະເຈົ້າແລະເພື່ອນຄົນນຶ່ງໄດ້ພາກັນນັ່ງລົມກັນໃນຣົດທີ່ບ່ອນຈອດຣົດໃນຕລາດແຫ່ງນຶ່ງ. ລາວໄດ້ນັດໃຫ້ໄປພົບກັບລາວເພື່ອໂອ້ລົມເຣື່ອງທີ່ບໍ່ຖືກຕ້ອງປອງດອງກັນທີ່ຈະທຳລາຍຄອບຄົວ. ລາວມີຄວາມເຈັບປວດຢ່າງໜັກ. ແລະເບິ່ງເໝືອນວ່າຄົງຈະບໍ່ມີທາງທີ່ຈະນຳໄປສູ່ຄວາມສງົບສຸກໄດ້ເລີຍ. ກ່ອນທີ່ຈະຈາກກັນໃນມື້ນັ້ນ, ລາວໄດ້ເວົ້າບາງຢ່າງທີ່ຊີ້ໃຫ້ເຫັນວ່າລາວຈະຊອກຫາທຸກວິທີທາງໃຫ້ລົງເອີຍກັນໂດຍສັນຕິ. ລາວໄດ້ເວົ້າວ່າ, "ເໜືອສິ່ງອື່ນໃດທັງໝົດທີ່ຂ້ອຍຕ້ອງການ, ເມື່ອຂ້ອຍຢືນຢູ່ຕໍ່ໜ້າພຣະພັກພຣະເຈົ້າແລ້ວໄດ້ຍິນພຣະອົງຕັດກັບຂ້ອຍວ່າ, "ດີແລ້ວ,ຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ." ຄວາມຮູ້ສຶກຢ່າງນີ້ມັນແຮງກວ່າການທົດລອງອື່ນໆທີ່ປະເຊີນກັບທາງຂອງລາວ, ຄວາມປາຖນາຂອງເພື່ອນຂ້າພະເຈົ້າແມ່ນເພື່ອຈະຖວາຍກຽດແກ່ພຣະເຈົ້າ.

## ສຶກສາພຣະຄັມພີ

### 1. ລອກແບບຈາກພຣະຄຣິດ (ຟີລິບປອຍ 2:1-8)

ທ່ານໂປໂລໄດ້ບັນລະຍາຍເຖິງບຸກຄລິກລັກສະນະຫລາຍຢ່າງຂອງຊີວິດທີ່ສົມບູນແບບ, ທີ່ມີສາຍສຳພັນຢ່າງຊາບຊຶ້ງ. ພວກເຮົາພັດທະນາສາຍສຳພັນໃຫ້ນີ້ມນວນໂດຍການມີຄວາມຄິດເຫັນໃຫ້ເປັນຄືກັນ. ພວກເຮົາດຳຣົງຊີວິດໃນຄວາມສງົບສຸກເມື່ອພວກເຮົາມີຄວາມຮັກທີ່ຄືກັນ. ພວກເຮົາມີຊັຍຊະນະເໜືອຄວາມແຕກແຍກໂດຍການມີຄວາມຮູ້ສຶກທີ່ຄືກັນ. ການຢູ່ຢ່າງສັນຕິມີຄວາມໝາຍວ່າການສຸມເປົ້າໝາຍໃສ່ຈຸດດຽວກັນ. ພວກຄົນທີ່ຢູ່ຢ່າງສັນຕິນັ້ນຈະບໍ່ມີຄວາມອິດສາແຂ່ງດີແຂ່ງເດັ່ນກັນ, ແຕ່ວ່າຢູ່ຢ່າງນອບນ້ອມຖ່ອມຕົວລົງຖືວ່າຜູ້ອື່ນນັ້ນດີກວ່າຕົນສເມີ. ພວກເຮົາຄອງຄອຍຫາຊີວິດແບບນີ້ມານານແລ້ວ, ແຕ່ວ່າພວກເຮົາຈະເລີ້ມຕົ້ນກັນຢ່າງໃດ? ພວກເຮົາຈະພົບພະລັງແບບນີ້ໄດ້ຢ່າງໃດ? ທ່ານໂປໂລສອນພວກເຮົາວ່າ ການທີ່ຈະສ້າງຄວາມສງົບສຸກໄດ້ນັ້ນບໍ່ໄດ້ເລີ້ມດ້ວຍຫລັກການອັນໃດອັນນຶ່ງເພື່ອໃຫ້ປະຕິບັດຕາມ, ແຕ່ວ່າດ້ວຍການເອົາແບບຢ່າງແລະຮຽນແບບຕາມ. ເອີແນັສກໍເດີນໄດ້ເປັນທະຫານຂອງອັງກິດແລະໄດ້ເປັນສະເລີຍເສິກຂອງພວກຄົນຍີ່ປຸ່ນໃນສົງຄາມໂລກຄັ້ງທີສອງ. ກໍເດີນແລະຄົນອື່ນໆໄດ້ຖືກບັງຄັບໃຫ້ສ້າງລາງຣົດໄຟໃຫ້ຜ່ານບ່ອນອັນຕະລາຍແລະປ່າດົງຕຶບທີ່ປະເທດພະມ້າ. ໃນຕອນທ້າຍຂອງການເຮັດວຽກໃນມື້ນຶ່ງ, ກໍມີການກວດການັບເບິ່ງ

ເຄື່ອງມືແລະເຫັນວ່າຊ້ວນອັນນຶ່ງໄດ້ຫາຍເສັຽໄປ. ພວກຄົນຍາມກໍໄດ້ຂູ່ເຂັນຈະລົງໂທດນັກໂທດທັງຫມົດຖ້າບໍ່ມີຜູ້ໃດຜູ້ນຶ່ງຍອມສາຣະພາບໃນການລັກເອົາຊ້ວນອັນນັ້ນ. ຫລັງຈາກນັ້ນເທິງເຕີບ, ນັກໂທດຄົນນຶ່ງກໍກ້າວອອກໄປຂ້າງຫນ້າ ແລະພວກຄົນຍາມກໍທຸບຕີຢ່າງບໍ່ເມດຕາປານີ. ຂນະທີ່ລາວນອນຟູມເລືອດຢູ່ນັ້ນ, ກໍມີຂ່າວແຈ້ງມາວ່າມີການນັບທີ່ຜິດພາດ. ເຄື່ອງມືບໍ່ໄດ້ເສັຽຫາຍ. ຊາຍຜູ້ນີ້, ທີ່ບໍ່ໄດ້ເຮັດຜິດອັນໃດ,ໄດ້ສະລະຕົວລາວເອງເຂົ້າສູ່ຄວາມທຸກທໍຣະມານແລະຖືກໂທດ ທີ່ລາວບໍ່ສົມຄວນຈະໄດ້ຮັບຖືວ່າຊີວິດຂອງເພື່ອນນັກໂທດທັງຫລາຍເຫນືອຊີວິດຂອງຕົນເອງ. ກໍເດີນ ໄດ້ບັນທຶກເອົາໄວ້ວ່າການກະທຳຂອງຊາຍຜູ້ນີ້ທີ່ບໍ່ຫ່ວງຕໍ່ການເສັຽສະລະຕົນເອງໄດ້ເຮັດໃຫ້ພວກນັກໂທດທັງຫມົດປ່ຽນນິສັຍຂອງພວກເຂົາໃຫ້ເປັນນຶ່ງດຽວຕໍ່ພວກທີ່ຈັບກຸມພວກເຂົານັ້ນ. ຈາກປະສົບການດັ່ງຕົວຢ່າງຂອງການຮັບໃຊ້ອັນນັ້ນໄດ້ນຳພວກເຂົາສູ່ຄວາມສງົບສຸກ.

ເປັນຈິງສຳລັບພວກເຮົາເຊັ່ນດຽວກັນ. ການຖວາຍກຽດຕໍ່ພຣະເຈົ້າໂດຍການສ້າງສັນຕິສຸກເລີ້ມຕົ້ນດ້ວຍການເອົາປະສົບການແລະການຮຽນແບບຈາກຕົວຢ່າງ, ຕົວຢ່າງຂອງພຣະເຢຊູ. ໃນຂນະທີ່ພວກທີ່ເຊື່ອຢູ່ໃນພຣະຄຣິດ, ພວກເຮົາສາມາດຕິດຕາມຕົວຢ່າງຂອງພຣະອົງແລະໃຫ້ລັກສະນະ...ຂອງພຣະເຢຊູຄຣິດຢູ່ໃນຕົວພວກເຮົາ. ພຣະເຢຊູໄດ້ສະເດັດມາປາກົດໃນຖານະເປັນພຣະເຈົ້າ, ເອົາຊີວິດຂອງພວກເຮົາໄວ້ກ່ອນຫນ້າຂອງພຣະອົງເອງ, ການຖືຕົວເອງວ່າເປັນຂ້ອຍໃຊ້. ພຣະອົງບໍ່ສົມຄວນທີ່ຈະໄດ້ຮັບຄວາມທຸກທໍຣະມານແລະການຖືກໂທດ, ຄືຕາຍທີ່ໄມ້ກາງແຂນ, ເພື່ອພວກເຮົາຈະມີສັນຕິສຸກກັບພຣະເຈົ້າແລະຕໍ່ຄົນອື່ນໆ. ທຸກໆຄັ້ງທີ່ພວກເຮົາປະສົບການກັບຕົວຢ່າງຂອງພຣະຄຣິດໂດຍຜ່ານການນະມັສການ, ການອ້ອນວອນອະທິຖານ, ແລະການສຶກສາພຣະຄັມພີ; ແລະທຸກໆຄັ້ງທີ່ພວກເຮົາຮຽນແບບຂອງພຣະອົງໂດຍການກະທຳຢ່າງນອບນ້ອມຖ່ອມຕົວແລະການຮັບໃຊ້ຄວາມຕ້ອງການຂອງຄົນອື່ນ, ກໍແມ່ນການຖວາຍກຽດແກ່ພຣະເຈົ້າ.

## <u>2. ເຫັນດີເຫັນພ້ອມໃນພຣະຜູ້ເປັນເຈົ້າ</u> (ຟີລິບປອຍ 4:2-3)

ທ່ານໂປໂລກ່າວເຖິງຄຣິສຕຽນສອງຄົນທີ່ບໍ່ຖືກຕ້ອງປອງດອງກັນ. ໃນຄຳເວົ້າສອງສາມຄຳນີ້, ທ່ານໂປໂລສອນພວກເຮົາຫລາຍຢ່າງທີ່ມີຄວາມສຳຄັນຫລາຍກ່ຽວກັບການສ້າງຄວາມສງົບສຸກ. ທຳອິດ, ທ່ານໂປໂລເອີ່ຍເຖິງຊື່ຂອງຄົນທັງສອງຄືນາງຢູໂອເດັຽແລະນາງຊິນຕິເຂ. ພວກເຮົາບໍ່ສາມາດທີ່ຈະກຳຈັດການບໍ່ຖືກຕ້ອງປອງດອງກັນແລ້ວໃຫ້ຄືນດີຕໍ່ກັນໄດ້ຈົນກວ່າຈະນຳບັນຫາອັນສະເພາະເຈາະຈົງທີ່ປະເຊີນຢູ່ນັ້ນມາແກ້ໄຂຢ່າງສັດຊື່. ພວກທີ່ໃຫ້ຄຳປຶກສາໄດ້ບົ່ງບອກເອົາໄວ້ວ່າພວກເຮົາຕ້ອງສັດຊື່ກ່ຽວກັບສາຍສຳພັນທີ່ຂາດສະບັ້ນນັ້ນກ່ອນໆທີ່ຈະສາມາດເລີ້ມເຮັດໃຫ້ຄືນດີໄດ້. ຢ່າງທີສອງ, ທ່ານໂປໂລຊັກຊວນທັງສອງຝ່າຍໃຫ້ເຫັນພ້ອມນຳກັນ. ເມື່ອເວລາມີການຜິດຂ້ອງຕ້ອງຖຽງກັນເກີດຂຶ້ນພວກເຮົາມັກຈະຄອຍຖ້າໃຫ້ອີກຝ່າຍນຶ່ງເປັນຜູ້ເລີ້ມຕົ້ນບາດກ້າວແຮກກ່ອນ, ໂດຍຄິດແບບຜິດໆວ່າຜູ້ທີ່ເລີ້ມກ່ອນນັ້ນເປັນຜູ້ທີ່ມີຄວາມຜິດ. ທ່ານໂປໂລບໍ່ໄດ້ໄຈ້ແຍກຊອກຫາວ່າຜູ້ໃດເປັນຜູ້ເຮັດຜິດຫລາຍ. ເພິ່ນຊັກຊວນໃຫ້ນາງຢູໂອເດັຽແລະນາງຊິນຕິເຂໃຫ້ເຫັນວ່າແຕ່ລະຄົນເປັນສ່ວນທີ່ຈະນຳພຣະກຽດແກ່ພຣະເຈົ້າ ໂດຍການສ້າງສຳພັນຂອງພວກເຂົາເຈົ້າໃຫ້ຄືນດີກັນອີກ. ການທີ່ຈະຖວາຍກຽດແກ່ພຣະເຈົ້າຂນະທີ່ບໍ່ຖືກຕ້ອງປອງດອງກັນນັ້ນຈຳເປັນທີ່ທັງສອງຝ່າຍຈະຕ້ອງເປັນສ່ວນໃນການເຮັດໃຫ້ຄືນດີກັນອີກ.

ທ່ານໂປໂລຊັກຊວນນາງຢູໂອເດັຽແລະນາງຊິນຕິເຂໃຫ້**ເຫັນດີເຫັນພ້ອມໃນອົງພຣະຜູ້ເປັນເຈົ້າ**. ເພິ່ນຕ້ອງການໃຫ້ພວກເຂົາເຈົ້າໃຫ້ເຫັນໃນສິ່ງທີ່ມີຄືກັນ ຄືເປັນຜູ້ທີ່ເຊື່ອໃນພຣະຄຣິດທີ່ມີຄວາມສຳຄັນຫລາຍກວ່າທຸກສິ່ງທີ່ເຮັດໃຫ້ພວກເຂົາເຈົ້າແຕກແຍກກັນ. ເພິ່ນຍັງຢາກໃຫ້ພວກເຂົາເຈົ້າໄດ້ຫລິງເຫັນກິຈການທີ່ພຣະຄຣິດປະທານໃຫ້ແກ່ພວກເຂົາເຮັດນັ້ນເປັນສິ່ງທີ່ຮີບດ່ວນກວ່າການບໍ່ລົງເອີຍກັນທີ່ຖ່ວງດຶງເອົາໄວ້ນັ້ນ. ເປັນຈິງສຳລັບພວກເຮົາຄືກັນ. ການສຳນຶກອັນຮ້ອນຮົນຕໍ່ການຮັບໃຊ້ມີຫລາຍເທົ່າໃດຍິ່ງເປັນການທີ່ຈະເຮັດໃຫ້ພວກເຮົາເອົາຊະນະຕໍ່ຄວາມແຕກຕ່າງຂອງພວກເຮົາແລະຮ່ວມເຮັດວຽກນຳກັນເພື່ອຖວາຍກຽດແກ່ພຣະເຈົ້າ. ສະມາຊິກທັງຫມົດໃນໂບດກໍຕົກຢູ່ໃນພາວະຂັບຂັນດ້ວຍໃນການທີ່ທັງສອງຄົນນີ້ຈະແກ້ໄຂຄວາມແຕກຕ່າງຂອງພວກເຂົາ. ທ່ານໂປໂລໄດ້ຖາມພວກສະມາຊິກຄົນອື່ນໆຂອງໂບດ, ຜູ້ນຶ່ງນັ້ນກໍຄືເພື່ອນຮ່ວມງານແທ້ຂອງເພິ່ນ...ກະເລເມ, ແລະໃຫ້ຖວາຍກຽດແກ່ພຣະເຈົ້າໂດຍການຊ່ວຍເຫລືອ

ພວກເຂົາໃຫ້ຄືນດີເປັນນິ່ງດຽວລາບລື້ນໃນຄອບຄົວຂອງພຣະເຈົ້າ.

ຄຣິສຕຽນທຸກໆຄົນກໍຕົກຢູ່ໃນພາວະຂັບຂັນດ້ວຍໃນກໍຣະນີທີ່ມີຄຣິສຕຽນຄົນໃດຄົນນຶ່ງທຳລາຍສາຍສຳພັນຕໍ່ກັນ. ເພື່ອຮັກສາຄຳພະຍານຂອງພວກເຮົາໃຫ້ເຂັ້ມແຂງແລະໃຫ້ເປັນທີ່ພະລັງສູ່ວຽກງານຂອງພຣະເຈົ້າ, ພວກເຮົາຕ້ອງເຮັດທຸກວິທີທາງເພື່ອຊ່ວຍຄົນອື່ນໆ (ຄຣິສຕຽນຫລືພວກທີ່ບໍ່ເຊື່ອ) ໃຫ້ຊະນະຕໍ່ຄວາມແຕກແຍກແລະນຳສູ່ການຄືນດີກັນ; ນີ້ຄືການຖວາຍກຽດແກ່ພຣະເຈົ້າ.

## 3. <u>ໄວ້ວາງໃຈໃນພຣະເຈົ້າ</u> (ຟີລິບປອຍ 4:4-7)

ສັນຕິສຸກເລີ້ມຕົ້ນໃນຫົວໃຈ. ຄວາມບໍ່ຖືກປອງດອງກັນຫລາຍໆຢ່າງໄດ້ເຮັດໃຫ້ຄົນແຕກແຍກກັນແລະທຳລາຍວຽກງານຂອງພຣະເຈົ້າທີ່ໄຫລຈາກຫົວໃຈທີ່ເຈັບປວດນັ້ນ. ຜ່ານຈາກພຣະທັມເຫລົ່ານີ້, ພຣະເຈົ້າປະທານຫົນທາງໃຫ້ພວກເຮົາຊະນະຕໍ່ຄວາມທຸກຮ້ອນໃນຫົວໃຈຂອງພວກເຮົາເພື່ອວ່າຄວາມກະວົນກະວາຍທັງປວງຈະບໍ່ເປັນແປວໄຟລຸກໄໝ້ອັນກາຍເປັນສນາມຮົບກັບຄົນອື່ນໆ.

ຂັ້ນທຳອິດຂອງການມີສັນຕິສຸກໃນຫົວໃຈແມ່ນ**ຊື່ນຊົມຍິນດີໃນພຣະຜູ້ເປັນເຈົ້າທຸກເວລາ**. ນີ້ບໍ່ໄດ້ຫມາຍຄວາມວ່າທຸກໆຂັ້ນຕອນຂອງຊີວິດຈະງ່າຍຫລືລາບລື້ນຢູ່ຕລອດ. ພວກເຮົາສາມາດຊື່ນຊົມຍິນດີກັບພຣະຜູ້ເປັນເຈົ້າທຸກເວລາເພາະວ່າພວກເຮົາຮູ້ແລ້ວວ່າໃນທຸກໆກໍຣະນີ, ພຣະຜູ້ເປັນເຈົ້າຊົງສະຖິດຢູ່ໃກ້ໆແລະຈຸດຫມາຍຂອງຊີວິດພວກເຮົາຢູ່ໃນການຄຸ້ມຄອງຮັກສາໃນພຣະອົງ. ຄວາມຊົມຊື່ນຍິນດີທີ່ນຳສັນຕິສຸກມາສູ່ຫົວໃຈຂອງພວກທີ່ເຊື່ອນັ້ນແມ່ນການເພີ້ມກຳລັງເມື່ອພວກເຮົາຫາກຝຶກຊ້ອມໃຫ້ສາຍສຳພັນຂອງພວກເຮົາຕໍ່ຜູ້ອື່ນໃຫ້ດີຂື້ນນັ້ນ. ພວກເຮົາຄວນເຮັດໃຫ້ໃຈອ່ອນສຸພາບຂອງພວກເຮົາປາກົດແກ່ຄົນທັງປວງ. ຄວາມຊົມຊື່ນຍິນດີທີ່ເປັນຂອງປະທານຈາກພຣະເຈົ້າຢ່າງບໍ່ຂາດສາຍຕໍ່ພວກເຮົານີ້ສາມາດບັງເກີດເປັນຂອງຂວັນອັນສັດຊື່ຂອງພວກເຮົາຂອງການຍອມຮັບ, ການເຂົ້າໃຈ, ແລະການສນັບສນູນຄົນອື່ນໆ.

ຄວາມສຸກພາຍໃນຈິດໃຈມາຈາກການເອົາການອະທິຖານປ່ຽນແທນຄວາມທຸກຮ້ອນໃຈ. ໂດຍຜ່ານພຣະຄຳຂອງພຣະອົງ, ພຣະເຈົ້າປະທານທາງອື່ນໃຫ້ອີກນອກຈາກຄວາມທຸກຮ້ອນໃຈຫລືຄວາມກະວົນກະວາຍ. ແທນທີ່ຈະຖືກແຕກສລາຍຈາກຄວາມຫຍຸ້ງຍາກທີ່ພວກເຮົາປະເຊີນຢູ່ນັ້ນ, ພວກເຮົາສາມາດທູນເຣື່ອງຄວາມປາຖນາຂອງພວກເຮົາທຸກຢ່າງຕໍ່ພຣະເຈົ້າ. ພວກເຮົາຄວນຈະອະທິຖານພ້ອມກັບການຂອບພຣະຄຸນ, ການຮູ້ບຸນຄຸນໃນທຸກສິ່ງສຳລັບການສະຖິດຢູ່ດ້ວຍຂອງພຣະອົງ, ຄວາມຮັກຂອງພຣະອົງ, ແລະກິຈການຂອງພຣະອົງໃນຊີວິດຂອງພວກເຮົາ.

ຜູ້ປຶກສາກ່ຽວກັບການແຕ່ງງານທີ່ຂ້າພະເຈົ້າຮູ້ຈັກໄດ້ໃຫ້ຫນ້າທີ່ຮັບຜິດຊອບແກ່ຄູ່ສົມຣົດທີ່ມີບັນຫາ. ລາວບອກວ່າ, "ທຸກໆມື້ຫລັງຈາກມື້ນີ້ຈົນກວ່າຈະພົບກັນອີກເທື່ອຫນ້າ, ພວກເຈົ້າທັງສອງຈະຕ້ອງຈັບມືກັນອະທິຖານອອກສຽງເພື່ອສາຍສຳພັນຂອງພວກເຈົ້າ." ລາວເວົ້າຕໍ່ໄປວ່າ "ທຸກໆຄູ່ໃດທີ່ກັບມາພົບໃນຄັ້ງຕໍ່ໄປນັ້ນລ້ວນແລ້ວແຕ່ມີຄວາມທຸກຮ້ອນໃຈຫນ້ອຍລົງແລະມີຄວາມຫວັງໃຫມ່ຕໍ່ອະນາຄົດຂອງພວກເຂົາ. ເມື່ອພວກເຮົາຫາກອະນຸຍາດໃຫ້ພຣະເຈົ້າເຂົ້າມາໃນຫົວໃຈທີ່ເຈັບຊ້ຳຂອງພວກເຮົາໂດຍຜ່ານການອະທິຖານ, ພຣະອົງນຳຄຳສັນຍາມານຳ, ເປັນສັນຍາທີ່ມີສັນຕິສຸກຂອງພຣະອົງ**ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິດ**. ໃນເວລາຂອງການແຕກແຍກກັນນັ້ນ, ຄຣິສຕຽນປະເຊີນກັບບັນຫາໃຫຍ່, ແຕ່ວ່າມັນກໍຍັງບໍ່ໃຫຍ່ທໍ່ຄຳສັນຍາຂອງພຣະເຈົ້າຄືສັນຕິສຸກ. ສັນຕິສຸກຂອງພຣະເຈົ້າເລັງເຖິງຫມົດທຸກຢ່າງພາຍໃຕ້ກົດຣະບຽບຂອງພຣະເຈົ້າ; ຫມົດທຸກຢ່າງທີ່ນີ້ແມ່ນຮວມທັງສາຍສຳພັນທີ່ແຫນ້ນຫນາດີ.

## 4. <u>ຕິດຕາມສິ່ງທີ່ດີທີ່ສຸດ</u> (ຟີລິບປອຍ 4:8-9)

ພໍ່ຂອງຂ້າພະເຈົ້າ, ຜູ້ທີ່ສາມາດສ້ອມແປງໄດ້ທຸກຢ່າງ, ມັກໃນການເອົາຈັກດູດພົມເກົ່າມາແປງແລ້ວກໍຂາຍຕໍ່. ທຸກໆບ່ອນທີ່ລາວໄປ, ລາວຈະຕ້ອງຊອກຫາຈັກດູດພົມເກົ່າ, ເພື່ອຈະນຳເອົາມາເຮືອນສ້ອມແປງໃນຫ້ອງໃຕ້ດິນ. ບັນຫາກໍຕາມມາເມື່ອລາວພົບພໍ້ແລະເອົາມາຫລາຍໂພດ. ຫ້ອງໃຕ້ດິນເມື່ອກ່ອນສອາດສອ້າງຄົນກໍສາມາດຢູ່ໄດ້, ແຕ່ດຽວນີ້ປາ

ກິດວ່າມັນເຕັມຮົກເຮື້ອໄປດ້ວຍຂອງເສດຂອບເກົ່າທີ່ພໍ່ໄດ້ຫາມານັ້ນ.

ໃນເວລາຂອງການແຕກແຍກ, ພວກເຮົາກໍຈອບທີ່ຈະຊອກຫາຂອງບໍ່ດີຕ່າງໆຈາກຄູ່ຕໍ່ສູ້, ແລະກໍນຳຂອງບໍ່ດີເຫລົ່ານັ້ນເຂົ້າມາໃນເຮືອນແລະຫົວໃຈຂອງພວກເຮົາໂດຍການຈົດຈຳແລະຕຽມແກ້ມືໃນໂອກາດອັນເໝາະສົມ. ຫົວໃຈຂອງພວກເຮົາກາຍເປັນສາງເກັບກຳຄວາມຜິດພາດ, ໄດ້ເຕັມລົ້ນດ້ວຍຂອງບໍ່ດີຕ່າງໆທີ່ສັດຕຣູໄດ້ກະທຳຕໍ່ພວກເຮົາ. ການທີ່ເຮັດໃຫ້ຈິດໃຈຂອງພວກເຮົາຮົກເຮື້ອດ້ວຍຂອງເສດບໍ່ແມ່ນການສນັບສນູນສັນຕິສຸກແລະບໍ່ໄດ້ຖວາຍກຽດແກ່ພຣະເຈົ້າເລີຍ.

ຄຣິສຕຽນຖວາຍກຽດແກ່ພຣະເຈົ້າໃນເມື່ອຫົວໃຈແລະຈິດໃຈເຕັມລົ້ນດ້ວຍສິ່ງທີ່ດີໆ, ສິ່ງທີ່ດີໆທີ່ພຣະເຈົ້າອະນຸຍາດໃຫ້ພວກເຮົາໄດ້ເຫັນໃນຜູ້ອື່ນແລະໃນສາຍສຳພັນກັບພວກເຂົາເຈົ້າ. ພວກເຮົາໄດ້ຖືກຊັກຊວນໃຫ້**ຕັ້ງຮາກຖານໃສ່ເທິງສິ່ງເຫລົ່ານີ້**, ເມື່ອມີຄວາມແຕກແຍກໃຫ້ເບິ່ງຜ່ານສິ່ງເຫລົ່ານີ້ເປັນຫລັກເພື່ອຖວາຍກຽດແກ່ພຣະເຈົ້າ. ສ້າງຊີວິດຂອງທ່ານຢູ່ເທິງສິ່ງທີ່**ສັດຈິງ**. ເລືອກຄຳເວົ້າແລະການກະທຳຕ່າງໆຈາກສິ່ງທີ່**ໜ້ານັບຖືໄດ້**. ເມື່ອໃດທີ່ທ່ານຢາກແກ້ແຄ້ນຕໍ່ຜູ້ທີ່ເຮັດຮ້າຍຕໍ່ທ່ານ, ໃຫ້ຮັກສາໄວ້ເຖິງຄວາມຍຸດຕິທັມ, ເຮັດໃຫ້**ຊອບທັມ**. ເມື່ອໃດຫາກຄົນອື່ນພະຍາຍາມດຶງທ່ານລົງໃຫ້ຢູ່ລະດັບດຽວກັບເຂົາ, ໃຫ້ຮັກສາຊີວິດຂອງທ່ານໃຫ້**ບໍຣິສຸດ**. ວັດແທກຊີວິດຂອງທ່ານໂດຍມາຕຖານຂອງຄວາມຮັກ, ໃຫ້ເຮັດແຕ່ສິ່ງທີ່ໜ້າ**ຮັກ**. ມຸ້ງໜ້າໃຫ້ເປັນ**ທີ່ຍົກຍໍຍິນດີ**, ການທີ່ຈະໄດ້ຮັບຄວາມນັບຖືຈາກຜູ້ອື່ນນັ້ນກໍໂດຍການຮັບຮູ້ສິ່ງທີ່ດີທີ່ທ່ານເຫັນໃນພວກເຂົານັ້ນ. ດຳຣົງຊີວິດໃນມາຕຖານທີ່ສູງ**ທາງສິນທັມອັນດີເລີດ**. ຄຸນນະພາບທັງປວງເຫລົ່ານີ້ໄດ້ຖືກຜລິດອອກມາໂດຍວິນຍານຂອງພວກທີ່ເຊື່ອບໍ່ແມ່ນມາຈາກຄວາມສາມາດຂອງຜູ້ນັ້ນ. ແກ້ໄຂປັບປຸງສ່ວນທີ່ແຕກຕ່າງກັນນັ້ນໃນທາງທີ່ພຣະເຈົ້າແລະຄອບຄົວຂອງພຣະອົງຈະສາມາດ**ສັຣເສີນ**ໄດ້.

## <u>ບົດຮຽນຊີວິດ</u>

ທ່ານພະຍາຍາມຢາກຖວາຍກຽດແກ່ພຣະເຈົ້າໃນຍາມບໍ່ຖືກຕ້ອງປອງດອງກັນບໍ່? ທ່ານຢູ່ເພື່ອລໍຖ້າວັນນັ້ນເມື່ອພຣະເຈົ້າສາມາດເວົ້າຕໍ່ທ່ານວ່າ, "ດີແລ້ວຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ"? ຈື່ຈຳທາງທີ່ສຳຄັນເຫລົ່ານີ້ໃນການຖວາຍກຽດແກ່ພຣະເຈົ້າເມື່ອມີການແຕກແຍກກັນເກີດຂຶ້ນ:

- ປະສົບການແລະຮຽນແບບຈາກຕົວຢ່າງພຣະເຢຊູຄຣິດ, ຜູ້ທີ່ໄດ້ສະແດງໃຫ້ພວກເຮົາໄດ້ເຫັນຫົນທາງຂອງພຣະເຈົ້າ ຊຶ່ງເປັນຂົວຕໍ່ສາຍສຳພັນທີ່ຫັກພັງ.
- ຍອມຮັບວ່າການມີສາມັນສຳນຶກຄືກັບຄົນອື່ນໆນັ້ນເປັນສິ່ງທີ່ຍິ່ງໃຫຍ່ກວ່າສິ່ງທີ່ແບ່ງແຍກທ່ານ. ທ່ານສາມາດເຫັນດີເຫັນພ້ອມກັນໃນອົງພຣະຜູ້ເປັນເຈົ້າ.
- ອະນຸຍາດໃຫ້ການອະທິຖານອ້ອນວອນກຳຈັດຄວາມທຸກຮ້ອນໃຈອອກຈາກຫົວໃຈກ່ອນມັນຈະແຜ່ໄປທຳລາຍສາຍສຳພັນຂອງທ່ານກັບຜູ້ອື່ນໆ.
- ຢ່າປ່ອຍໃຫ້ໂອກາດບໍ່ດີແຜ່ຂຍາຍສິ່ງທີ່ບໍ່ດີນັ້ນໃຫ້ເຕັມລົ້ນໃນຫົວໃຈຂອງທ່ານ. ເສີມສ້າງຊີວິດຂອງທ່ານຢູ່ເທິງສິ່ງທີ່ຈະຖວາຍກຽດແກ່ພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PA.